ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2647 /ຫອຄ.ກຊອ

ນະຄອນຫຼວງວຽງຈັນ, ວັນທີ 30 ຕຸລາ 2018

## ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ

- ບັນດາຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ

ເລື່ອງ: ເພີ່ມທະວີເອົາໃຈໃສ່ການຫຼຸດຜ່ອນການນຳໃຊ້ຖົງຢາງປລາສຕິກເພື່ອບັນຈຸສິນຄ້າ ແລະ ພາຊະນະບັນຈຸທີ່ຜະລິດຈາກປລາສຕິກ

- ອີງຕາມ ດຳລັດວ່າດ້ວຍການເຄື່ອນໄຫວ ແລະ ການຈັດຕັ້ງ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ບົດບັນທຶກກອງປະຊຸມປຶກສາຫາລືກ່ຽວກັບການຈຳກັດການນຳໃຊ້ຖົງຢາງປລາສຕິກ ແລະ ການຫ້າມນຳເຂົ້າຂີ້ເຫຍື້ອປລາສຕິກ ລະຫວ່າງ ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຮ່ວມກັບ ຮອງລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຄັ້ງວັນທີ 15 ມິຖຸນາ 2018.

ເພື່ອເປັນການປູກຈິດສຳນຶກໃຫ້ແກ່ບັນດາຮ້ານຄ້າ, ຮ້ານອາຫານ, ຕະຫຼາດ ແລະ ຜູ້ຊົມໃຊ້ ໃຫ້ຫຼຸດຜ່ອນການນຳໃຊ້ຖົງຢາງປລາສຕິກ ແລະ ພາຊະນະບັນຈຸທີ່ຜະລິດຈາກປລາສຕິກ. ພ້ອມທັງເປັນການປົກປັກຮັກສາສິ່ງແວດລ້ອມ ແລະ ພັດທະນາເສດຖະກິດຕາມທິດສີຂຽວໄປພ້ອມກັນ.

### ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:

1. ໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ສົມທົບ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຊຸກຍູ້ ບັນດາຮ້ານຄ້າ, ຮ້ານອາຫານ ແລະ ຕະຫຼາດ ເພື່ອປະຕິບັດດັ່ງນີ້:

1.1 ຫຼຸດຜ່ອນປະລິມານການນຳໃຊ້ ແລະ ກ້າວໄປເຖິງການຢຸດເຊົານຳໃຊ້ຖົງຢາງປລາສຕິກ ແລະ ພາຊະນະບັນຈຸສິນຄ້າໃຫ້ແກ່ຜູ້ຊົມໃຊ້. ໂດຍຫັນມານຳໃຊ້ວັດສະດຸທີ່ຍ່ອຍສະຫຼາຍໄດ້ໄວ ຫຼື ຖົງຜ້າທີ່ເປັນມິດກັບສິ່ງແວດລ້ອມ ແລະ ສາມາດນຳກັບມາໃຊ້ຄືນໃໝ່ໄດ້.

1.2 ໃຫ້ມີການວາງຂາຍຖົງເຄື່ອງ, ພາຊະນະບັນຈຸສິນຄ້າທີ່ສາມາດນຳກັບມາໃຊ້ຄືນໃໝ່ ໃນບໍລິເວນໃກ້ກັບໂຕະຄິດໄລ່ເງິນ ຫຼື ບໍລິເວນທີ່ງ່າຍໃນການສັງເກດເຫັນຂອງລູກຄ້າ ທີ່ຕ້ອງການຊື້ຖົງເພື່ອບັນຈຸສິນຄ້າ.

1.3 ໂຄສະນາເຜີຍແຜ່ດ້ວຍການຕິດແຜ່ນປ້າຍໂຄສະນາ ແລະ ສ້າງກິດຈະກຳການຊຸກຍູ້ການຫຼຸດຜ່ອນ ແລະ ຢຸດເຊົາການນຳໃຊ້ຖົງຢາງປລາສຕິກ ແລະ ພາຊະນະບັນຈຸທີ່ຜະລິດຈາກປລາສຕິກ, ໂດຍສົ່ງເສີມໃຫ້ຜູ້ຊົມໃຊ້ຫັນມານຳໃຊ້ຖົງເຄື່ອງ, ພາຊະນະບັນຈຸທີ່ສາມາດນຳກັບມາໃຊ້ຄືນໃໝ່ໄດ້ ຫຼື ນຳໃຊ້ວັດສະດຸທີ່ຍ່ອຍສະຫຼາຍໄດ້ໄວ ແລະ ເປັນມິດກັບສິ່ງແວດລ້ອມ;

1.4 ນຳໃຊ້ກິດຈະກຳທີ່ເປັນການສົ່ງເສີມການຕະຫຼາດ ໃນການຊຸກຍູ້ໃຫ້ຜູ້ຊົມໃຊ້ຫຼຸດຜ່ອນ ແລະ ຢຸດເຊົາການນຳໃຊ້ຖົງຢາງປລາສຕິກ ຕົວຢ່າງ: ຖ້າຜູ້ຊົມໃຊ້ບໍ່ເອົາຖົງຢາງປລາສຕິກ ຫຼື ພາຊະນະບັນຈຸເພື່ອບັນຈຸສິນຄ້າ ຫຼື ອາຫານ ແມ່ນຈະໄດ້ຮັບສ່ວນຫຼຸດ 500 ຫາ 1.000 ກີບ ຕາມຄວາມເໝາະສົມ ຫຼື ອອກບັດສະແຕັມຮັກໂລກຮັກສິ່ງແວດລ້ອມ ເພື່ອສະສົມຄະແນນໄວ້ແລກຮັບຂອງລາງວັນ ແລະ ສ່ວນຫຼຸດຕ່າງໆ.

2. ໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ສົມທົບ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ລົງຕິດຕາມ ບັນດາຮ້ານຄ້າ, ຮ້ານອາຫານ ແລະ ຕະຫຼາດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ປະກົດຜົນເປັນຈິງ.

3. ໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ສົມທົບ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ເພື່ອປະເມີນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໂດຍໃຫ້ມີນະໂຍບາຍຍ້ອງຍໍຮ້ານຄ້າດີເດັ່ນ ທີ່ສົ່ງເສີມການຄ້າແບບເປັນມິດຕໍ່ສິ່ງແວດລ້ອມ.

4. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າຫ້ອງການ,໒

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ນ.ບານສະຕິ ເທບພະວົງ

<u>ບ່ອນສົ່ງ</u>:
- ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງ ເພື່ອຊາບ
- ຫ້ອງການ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຊາບ